**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະຕ ເອກະພາບ ວັດທະນາຖາວອນ

---

**ສໍານັກງານ ນາຍົກລັດຖະມົນຕີ** ເລກທີ: 06 / ນຍ

# ດໍາລັດ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍ ເຄື່ອງໝາຍການຄ້າ

- ອີງຕາມ ກົດໝາຍວ່າດ້ວຍ ການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນ ຕ່າງປະເທດ ຢູ່ ສປປ ລາວ
- ອີງຕາມ ກົດໝາຍວ່າດ້ວຍທຸລະກິດ
- ອີງຕາມ ການສະເໜີ ຂອງຫົວໜ້າອົງການ ວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ.

## ນາຍົກລັດຖະມົນຕີອອກດໍາລັດ

## <u>ໝວດທີ I</u>

## ຫລັກການທົ່ວໄປ

<u>ມາດຕາ 1:</u> ດໍາລັດວ່າດ້ວຍ ເຄື່ອງໝາຍການຄ້າ ວາງອອກເພື່ອຊຸກຍູ້ ແລະ ສົ່ງເສີມການລົງທຶນ ຂອງຕ່າງປະເທດ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຊຸກຍູ້ການຄ້າ ຢູ່ພາຍໃນ ແລະ ຕ່າງປະເທດ, ຊຸກຍູ້ການຜະລິດສິນຄ້າ ໃຫ້ມີຄຸນນະພາບດີ, ປົກປ້ອງຜູ້ຊົມໃຊ້ ແລະ ຕ້ານການປອມແປງສິນຄ້າ ແລະ ທຸລະກິດທີ່ຜິດກົດໝາຍ.

<u>ມາດຕາ 2:</u> " ເຄື່ອງໝາຍການຄ້າ " ແມ່ນສັນຍາລັກໜຶ່ງ ທີ່ສາມາດເຫັນໄດ້ດ້ວຍຕາເປົ່າ ຊຶ່ງເຮັດໃຫ້ຈໍາແນກໄດ້ ຜະລິດຕະພັນສິນຄ້າ ຫລື ການບໍລິການຕ່າງໆ ຂອງກິດຈະການໃດໜຶ່ງ. ເຄື່ອງໝາຍອາດເປັນ ຄໍາສັບ, ຮູບພາບ ຫລື ທັງສອງຢ່າງນໍາກັນ ທີ່ມີສີສັນຕ່າງໆ.

" ເຄື່ອງໝາຍການຄ້າ " ແມ່ນສັນຍາລັກໜຶ່ງ ທີ່ໄດ້ນໍາໃຊ້ເປັນເຄື່ອງໝາຍ ຂອງຜະລິດຕະພັນສິນຄ້າ ຫລື ໃຊ້ກັບການບໍລິການໃດໜຶ່ງ ເພື່ອຢັ້ງຢືນ ສະແດງໃຫ້ເຫັນວ່າ ຜະລິດຕະພັນສິນຄ້າ ແລະ ການບໍລິການນັ້ນແມ່ນ ຂອງເຈົ້າຂອງເຄື່ອງມາຍການຄ້າທີ່ສ້າງຂຶ້ນ.

<u>ມາດຕາ 3:</u> ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄຸ້ມຄອງ ແລະ ປົກປ້ອງ ເຄື່ອງໝາຍການຄ້າ ໃນ ຂອບເຂດທົ່ວປະເທດ ບົນພື້ນຖານລະບຽບກົດໝາຍ.

<u>ມາດຕາ 4:</u> ເຄື່ອງໝາຍການຄ້າໃດໜຶ່ງ ຈະໄດ້ຮັບການປົກປ້ອງ ກໍ່ຕໍ່ເມື່ອໄດ້ຂຶ້ນທະບຽນ ຢູ່ ສປປ ລາວ ແລ້ວ.

<u>ມາດຕາ 5:</u> ບຸກຄົນ ຫລື ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ທໍາການຜະລິດສິນຄ້າ, ເຮັດທຸລະກິດ ແລະ ບໍລິການ ທີ່ຖືກຕ້ອງຕາມກົດໝາຍ ມີສິດຂໍຂຶ້ນທະບຽນເຄື່ອງໝາຍການຄ້າ.

ບຸກຄົນ ຫລື ນິຕິບຸກຄົນ ຢູ່ຕ່າງປະເທດ ທີ່ມີຈຸປະສົງ ຂໍຂຶ້ນທະບຽນເຄື່ອງໝານການຄ້າ ຕ້ອງໄດ້ມີຕົວແທນ ຢູ່ ສປປ ລາວ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 6:** ບຸກຄົນ ຫລື ນິຕິບຸກຄົນໃດໜຶ່ງ ກ່ອນຈະນຳໃຊ້ເຄື່ອງໝາຍການຄ້າ ທີ່ຜູ້ໄດ້ທຳການຂໍຂຶ້ນທະບຽນ ຢູ່ ສ ປປ ລາວ ແລ້ວ ຕ້ອງໄດ້ຮັບການເຫັນດີເຫັນພ້ອມຈາກເຈົ້າຂອງທະບຽນເຄື່ອງໝາຍການຄ້າ ແລະ ແຈ້ງໃຫ້ອົງການ ວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ຮັບຮູ້ນຳເສຍກ່ອນ.

## ໝວດທີ II
## ການຂຶ້ນທະບຽນ ເຄື່ອງໝາຍການຄ້າ

**ມາດຕາ 7:** ເອກະສານ ຂໍຂຶ້ນທະບຽນ ເຄື່ອງໝາຍການຄ້າ ປະກອບດ້ວຍ:

- ໃບຄຳຮ້ອງ
- ແບບຂອງເຄື່ອງໝາຍ
- ບັນຊີລາຍຊື່ ຂອງຜະລິດຕະພັນສິນຄ້າ ພ້ອມດ້ວຍລັກສະນະ ແລະ ຄຸນນະພາບ ຂອງ ຜະລິດຕະພັນສິນຄ້າ ຫລື ການບໍລິການ ທີ່ຈະນຳໃຊ້ເຄື່ອງໝາຍການຄ້າດັ່ງກ່າວ ແລະ ເອກະສານອື່ນໆ ທີ່ຈຳເປັນ.

ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຈຸດປະສົງ ຂໍຂຶ້ນທະບຽນ ເຄື່ອງໝາຍການຄ້າ ໃຫ້ຍື່ນຄຳຮ້ອງ ຢູ່ທີ່ອົງການ ວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ.

ສຳລັບບຸກຄົນ ຫລື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດ ໃຫ້ນຳໃຊ້ເຄື່ອງໝາຍການຄ້າ ທີ່ມີຈຸດປະສົງຢາກຂໍຂຶ້ນທະບຽນ ຢູ່ ສປປ ລາວ ນັ້ນ ຕ້ອງມີໃບອະນຸຍາດ ຂອງຜູ້ມອບມາປະກອບຕື່ມ, ໃນໃບອະນຸຍາດດັ່ງກ່າວ ຕ້ອງມີການກຳນົດເຖິງຄຸນລັກສະນະ ແລະ ຄຸນນະພາບ ຂອງຜະລິດຕະພັນສິນຄ້າ ຫລື ການບໍລິການ ທີ່ຈະນະໃຊ້ເຄື່ອງໝາຍດັ່ງກ່າວ. ໃນກໍລະນີການກຳນົດ ສິດກວດກາຄຸນນະພາບ ຂອງຜະລິດຕະພັນສິນຄ້າ ຫລື ການບໍລິການ ຂອງຜູ້ມອບສິດນຳໃຊ້.

**ມາດຕາ 8:** ອົງການ ວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ຮັບ ແລະ ຄົ້ນຄ້ວາພິຈາລະນາຄຳຮ້ອງ ຂໍຂຶ້ນທະບຽນເຄື່ອງໝາຍການຄ້າ, ອອກໃບທະບຽນເຄື່ອງໝາຍການຄ້າ ແລະ ພິມເຜີຍແຜ່ຜົນ ຂອງການຂຶ້ນທະບຽນດັ່ງກ່າວ.

**ມາດຕາ 9:** " ເຄື່ອງໝາຍລວມ " ແມ່ນຄື່ອງໝາຍການຄ້າ ທີ່ນຳໃຊ້ກັບຜະລິດຕະພັນສິນຄ້າ ຫລື ການບໍລິການ ຂອງ ບັນດາກິດຈະການ ທີ່ແຕກຕ່າງກັນ ແຕ່ນຳໃຊ້ເຄື່ອງໝາຍອັນດຽວກັນ ພາຍໄຕ້ການກວດກາ ຂອງເຈົ້າຂອງທະບຽນເຄື່ອງໝາຍການຄ້າລວມກັນ.

ສຳລັບຄຳຮ້ອງຂໍຂຶ້ນທະບຽນ ເຄື່ອງໝາຍລວມ ໃຫ້ປະກອບເອກະສານ ແລະ ປະຕິບັດຕາມການກຳນົດໄວ້ໃນ ມາດຕາ 7 ເທິງນີ້. ນອກຈາກນັ້ນ ຕ້ອງສະເໜີລະບຽບການນຳໃຊ້ ຄື່ອງໝາຍລວມມາພ້ອມ. ໃນກໍລະນີທີ່ມີການປ່ຽນແປງການນຳໃຊ້ ເຄື່ອງໝາຍລວມດັ່ງກ່າວ ເຈົ້າຂອງທະບຽນຕ້ອງແຈ້ງໃຫ້ ອົງການ ວິທິຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ເພື່ອອະນຸມັດ

**ມາດຕາ 10:** ໃນເມື່ອມີຫລາຍຄົນ ຍື່ນຄຳຮ້ອງຂໍຂຶ້ນທະບຽນເຄື່ອງໝາຍການຄ້າ ປະເພດດຽວກັນ ຜູ້ທີ່ໄດ້ຮັບບູລິມະສິດ ໃນການຄົ້ນຄ້ວາພິຈາລະນາ ແລະ ອະນຸມັດນັ້ນ ແມ່ນຜູ້ມາຍື່ນຄຳຮ້ອງກ່ອນໝູ່ ທີ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 7.

ມາດຕາ 11: ໃບທະບຽນ ເຄື່ອງໝາຍການຄ້າ ມີກຳນົດ 10 ປີ ນັບຕັ້ງແຕ່ມື້ມາຍື່ນຄຳຮ້ອງຂໍຂຶ້ນທະບຽນເປັນຕົ້ນໄປ ແລະ ສາມາດຕໍ່ອາຍຸໄດ້ແຕ່ລະເທື່ອ ມີກຳນົດ 10 ປີ.

ມາດຕາ 12: ເຄື່ອງໝາຍການຄ້າ ທີ່ຈະບໍ່ໄດ້ຮັບອະນຸມັດ ຂຶ້ນທະບຽນມີດັ່ງຕໍ່ໄປນີ້:

ເຄື່ອງໝາຍການຄ້າ ທີ່ບໍ່ຈະແຈ້ງຊຶ່ງບໍ່ພາໃຫ້ຈຳແນກໄດ້ ຜະລິດຕະພັນສິນຄ້າ ຫລື ການບໍລິການ ໃດໜຶ່ງ.

ເຄື່ອງໝາຍ ທີ່ມີລັກສະນະຂັດກັບ ວັດທະນະທຳຮີດຄອງປະເພນີອັນດີງາມຂອງຊາດ ແລະ ຂັດກັບຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ.

ເຄື່ອງໝາຍ ທີ່ເຮັດໃຫ້ສາທາລະນະຊົນ ຫລື ອົງການການຄ້າຕ່າງໆເຂົ້າໃຈຜິດ ໂດຍສະເພາະ ເຄື່ອງໝາຍທີ່ພົວພັນເຖິງ ພູມີປະເທດຕົ້ນກຳເນີດ, ເນື້ອແທ້, ຄຸນລັກສະນະ ຂອງຜະລິດຕະພັນສິນຄ້າ ຫລື ການບໍລິການ.

ເຄື່ອງໝາຍ ທີ່ມີການລອກແບບ ຫລື ຮຽນແບບ ຫລື ໃນອົງປະກອບເຄື່ອງໝາຍດັ່ງກ່າວ ມີເຄື່ອງໝາຍຊາດ, ທຸງ ຫລື ສັນຍາລັກຊາດ, ເອກະລັກທາງດ້ານວັດທະນະທຳ ຫລື ປູສະນີຍະສະຖານຂອງຊາດ, ຊື່ເຕັມ ຫລື ຊື່ຫຍໍ້ ຂອງລັດໃດໜຶ່ງ, ຂອງອົງການຈັດຕັ້ງສາກົນ ຫລື ຂອງອົງການທີ່ຖືກສ້າງຕັ້ງຂຶ້ນ ໂດຍສົນທິສັນຍາລະຫວ່າງຊາດ, ເຄື່ອງໝາຍ ທີ່ມີຕາປະທັບທາງການ ກ່ຽວກັບການກວດກາ ແລະ ການຮັບປະກັນຂອງລັດ ຫລື ຂອງອົງການຈັດຕັ້ງສາກົນໃດໜຶ່ງ, ຍົກເວັ້ນກໍລະນີ ທີ່ໄດ້ຮັບອະນຸຍາດ ຈາກລັດຖະບານ ຫລື ຈາກອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງ.

ເຄື່ອງໝາຍ ທີ່ມີເອກະລັກ ຄ້າຍຄືກັນກັບເຄື່ອງໝາຍການຄ້າ ຫລື ຊື່ການຄ້າ ຂອງຜະລິດຕະພັນສິນຄ້າ ຫລື ຂອງການບໍລິການ ທີ່ໄດ້ຖືກຮັບຮູ້ທົ່ວໄປແລ້ວ.

## ໝວດທີ III
## ສິດທີ່ໄດ້ຮັບຈາກການຂຶ້ນທະບຽນ

**ມາດຕາ 13:** ເຈົ້າຂອງທະບຽນ ເຄື່ອງໝາຍການຄ້າ ມີສິດດັ່ງນີ້:

ຜູກຂາດໃນການນຳໃຊ້ດ້ວຍຕົນເອງ ຫລື ອະນຸຍາດໃຫ້ຜູ້ອື່ນ ນຳໃຊ້ເຄື່ອງໝາຍການຄ້າໂດຍມີຄວາມຮັບຜິດຊອບ ຕໍ່ກົດໝາຍ.

ຮ້ອງຟ້ອງບຸກຄົນ ຫລື ນິຕິບຸກຄົນ ທີ່ໄດ້ປອມແປງ ຫລື ນຳໃຊ້ເຄື່ອງໝາຍການຄ້າໂດຍບໍ່ໄດ້ຮັບອະນຸຍາດ.

ເຈົ້າຂອງທະບຽນເຄື່ອງໝາຍການຄ້າ ຫລື ຜູ້ທີ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງທະບຽນເຄື່ອງໝາຍການຄ້າ ບໍ່ມີສິດກວມເອົາກິດຈະການທີ່ພົວພັນເຖິງຜະລິດຕະພັນສິນຄ້າ ຫລື ການບໍລິການອື່ນໆ ທີ່ມີຢູ່ໃນ ສປປ ລາວ.

**ມາດຕາ 14:** ສິດຜູກຂາດຂອງເຈົ້າຈອງ ເຄື່ອງໝາຍການຄ້າ ທີ່ໄດ້ຂຶ້ນທະບຽນແລ້ວຈະຕົກໄປ ໃນກໍລະນີດັ່ງນີ້:

- ເຈົ້າຂອງເຄື່ອງໝາຍການຄ້າ ບໍ່ນຳໃຊ້ດ້ວຍຕົນເອງ ຫລື ບໍ່ອະນຸຍາດໃຫ້ຜູ້ອື່ນໃຊ້ ໃນໄລຍະຫ້າປີຕໍ່ເນື່ອງກັນ ເວັ້ນເສຍແຕ່ມີເຫດສຸດວິໃສ.
- ໃບທະບຽນ ເຄື່ອງໝາຍການຄ້າ ໝົດກຳນົດ.

ສິດຜູກຂາດ ຂອງເຈົ້າຂອງເຄື່ອງໝາຍການຄ້າ ທີ່ໄດ້ຂຶ້ນທະບຽນແລ້ວ ຈະຕົກໄປຖ້າຫາກວ່າ ໃບທະບຽນເຄື່ອງໝາຍການຄ້າໝົດກຳນົດ ເວັ້ນເສຍແຕ່ໄດ້ຕໍ່ອາຍຸໃບທະບຽນດັ່ງກ່າວ.

**ມາດຕາ 15:** ໃນກໍລະນີ ຜູ້ຂໍຂຶ້ນທະບຽນຫາກໄດ້ຂຶ້ນທະບຽນເຄື່ອງໝາຍການຄ້າແບບດຽວກັນ ຢູ່ຕ່າງປະເທດມາ

ກ່ອນແລ້ວ ຜູ້ກ່ຽວມີສິດທວງເອົາ ວັນບຸລິມະສິດໄດ້ ໃນເວລາມາຂໍຂຶ້ນທະບຽນ ຢູ່ ສປປ ລາວ ແຕ່ຕ້ອງມີໃບຢັ້ງຢືນທີ່ສອດຄອງກັບຫລັກການສາກົນ ແລະ ລະບຽບກົດໝາຍ ຂອງ ປະເທດທີ່ກ່ຽວຂ້ອງ ກ່ຽວກັບການປົກປ້ອງຊັບສິນທາງປັນຍາ ຄັດຕິດມານຳເອກະສານ ຂໍຂຶ້ນທະບຽນເຄື່ອງໝາຍການຄ້າ.

<u>ມາດຕາ 16:</u> ການປ່ຽນເຈົ້າຂອງຄຳຮ້ອງ ຂໍຂຶ້ນທະບຽນ ຫລື ການໂອນກຳມະສິດເຄື່ອງໝາຍການຄ້າ ໃຫ້ຜູ້ອື່ນນັ້ນຈະຕ້ອງໄດ້ຮັບອະນຸຍາດ ແລະ ຖືກບັນທຶກເປັນຫລັກຖານ ຈາກ ອົງການ ວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ເສຍກ່ອນ ຈຶ່ງຈະມີຜົນສັກສິດ.

## <u>ໝວດທີ IV</u>

## ມາດຕະການ ຕໍ່ຜູ້ລະເມີດ

<u>ມາດຕາ 17:</u> ບຸກຄົນ ຫລື ນິຕິບຸກຄົນ ທີ່ນຳໃຊ້ເຄື່ອງໝາຍການຄ້າ ໂດຍບໍ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງເຄື່ອງໝາຍການຄ້າ ທີ່ໄດ້ຂຶ້ນທະບຽນການຄ້າ ຈະຖືວ່າເປັນຜູ້ລະເມີດ ລິຂະສິດເຄື່ອງໝາຍການຄ້າ.

ຜູ້ລະເມີດລິຂະສິດ ເຄື່ອງໝາຍການຄ້າ ຈະຖືກຕັກເຕືອນ ຫລື ດຳເນີນຄະດີຕາມກົດໝາຍ ຢູ່ ສປປ ລາວ ແລ້ວແຕ່ກໍລະນີ.

## <u>ໝວດທີ V</u>

## ບົດບັນຍັດ ສຸດທ້າຍ

<u>ມາດຕາ 18:</u> ມອບໃຫ້ ອົງການ ວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ເປັນຜູ້ປະສານສົມທົບກັບກະຊວງ ອຸດສະຫະກຳ - ຫັດຖະກຳ, ກະຊວງ ການຄ້າ ແລະ ຂະແໜງການຕ່າງໆ ທີ່ກ່ຽວຂ້ອງຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍດຳລັດສະບັບນີ້ ໃຫ້ເປັນລະອຽດ ຮັບປະກັນຄວາມສັກສິດ ໃນການກວດກາ ແລະ ຄຸ້ມຄອງການເຄື່ອນໄຫວຢ່າງເຂັ້ມງວດ.

<u>ມາດຕາ 19:</u> ສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການທຽບເທົ່າ, ແຂວງ ແລະ ກຳແພງນະຄອນ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຕາມໜ້າທີ່ ຂອງໃຜລາວ.

<u>ມາດຕາ 20:</u> ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 18 ມັງກອນ, 1995

ນາຍົກລັດຖະມົນຕີ



ຄຳໄຕ ສີພັນດອນ